ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອັດຕະປື

ພະແນກສຶກສາທິການ ແລະ ກິລາແຂວງ

ເລກທີ......60......../ສກຂ

ແຂວງອັດຕະປື, ວັນທີ 23.1.ເມສາ2026

## ໜັງສືເຊີນເຂົ້າຮ່ວມການປະມູນ

1. ພະແນກສຶກສາທິການ ແລະ ກິລາ ແຂວງອັດຕະປື ໄດ້ນຳໃຊ້ຮ່ວງເງິນແຜນງົບປະມານ ແລະ ການລົງທຶນ ປີ 2026 ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸທິເໝາະສົມ ເຂົ້າຍື່ນຊອງປະມູນໂຄງການສ້ອມແປງໂຮງຮຽນໃນ 3 ເມືອງຄື: ເມືອງສະໜາມໄຊ(ໂຮງຮຽນ ປະຖົມ ບ້ານດອນມ່ວງ 3 ຫ້ອງ), ເມືອງສາມັກຄີໄຊ(ໂຮງຮຽນ ປະຖົມ ບ້ານຄັງ 1 ຫ້ອງ, ໂຮງຮຽນ ມັດທະຍົມຕົ້ນ ຫຼັກ 52 ຈຳນວນ 1 ຫ້ອງ), ເມືອງຊານໄຊ(ໂຮງຮຽນ ປະຖົມ ບ້ານວັງໄຊ 1 ຫ້ອງ) ໄລຍະການສ້ອມແປງແມ່ນ 1 ປີ ຫຼື 365 ວັນ.
2. ການປະມູນນີ້ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງພາຍໃນທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ເອກະສານຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
3. ຜູ້ປະມູນຕ້ອງມີສຳເນົາເອກະສານໃບອະນຸຍາດດຳເນີນທຸລະກິດ, ໃບທະບຽນວິສະຫະກິດທາງດ້ານການກໍ່ ສ້າງ-ສ້ອມແປງເຄຫາສະຖານ ແລະ ໃບມອບພັນທະອາກອນປີ 2026 ທີ່ຖືກຕ້ອງຕາມກົດໝາຍ.
4. ບໍລິສັດໃດທີ່ສົນໃຈຂໍເຊີນຕິດຕໍ່ຂໍ້ມູນໄດ້ທີ່ຂະແໜງບໍລິຫານ ແລະ ການເງິນພະແນກພະແນກສຶກສາທິການ ແລະ ກິລາແຂວງອັດຕະປື ຕາມໂມງລັດຖະການ ເລີ້ມແຕ່ວັນທີ 24/4/2026 ເຖິງ ວັນທີ 29/5/2026 ໃນລາຄາ 1,000,000ກີບ/ຊອງ ຈຳນວນເງິນດັ່ງກ່າວຈະບໍ່ມີການສົ່ງຄືນ (ວິທີການຊຳລະຕ້ອງຈ່າຍເປັນເງິນສົດ).
5. ຊອງປະມູນໂຄງການສ້ອມແປງໂຮງຮຽນ ໃນ 3 ເມືອງ(ເມືອງສະໜາມໄຊ, ເມືອງ ສາມັກຄີໄຊ, ເມືອງຊານໄຊ) ຈະຕ້ອງໄດ້ສົ່ງບໍ່ໃຫ້ ກາຍເວລາ 09:00 ໂມງ ຂອງວັນທີ 27/5/2026 ທີ່ຂະແໜງບໍລິຫານ ແລະ ການເງິນພະແນກສຶກສາທິການ ແລະ ກິລາແຂວງອັດຕະປື, ຊອງປະມູນສົ່ງຊ້າກ່ວາເວລາທີ່ໄດ້ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ ແລະ ຈະດຳເນີນເປີດຊອງໃນເວລາ 09:30 ໂມງ ຂອງວັນດຽວກັນໂດຍຊ້ອງໜ້າຄະນະກຳມະການ ແລະ ຕົວແທນຂອງຜູ້ເຂົ້າຮ່ວມແຂ່ງຂັນປະມູນ.
6. ສອບຖາມຂໍ້ມູນເພີ່ມເຕີມກະລຸນາຕິດຕໍ່ພົວພັນ ທ່ານ ນິລະນາມ ແອວສີ ວິຊາການກໍ່ສ້າງ ພະແນກສຶກສາທິການ ແລະ ກິລາແຂວງອັດຕະປື ຕາມທີ່ຢູ່ຂ້າງລຸ່ມນີ້:

-ຊື່ສຳນັກງານ: ພະແນກສຶກສາທິການ ແລະ ກິລາແຂວງ

-ທີ່ຕັ້ງ: ບ້ານວັດຫຼວງ ເມືອງສາມັກຄີໄຊ ແຂວງອັດຕະປື

-ໂທ: 036 211015 , 020 99809855.

-ອີເມວ: KITOUNE9855@GMAI.COM

ຫົວໜ້າພະແນກ

ພະແນກ ສຶກສາທິການ ແລະ ກິລາ

ສະແກນດ້ວຍ CamScanner